ສຳນັກງານ ຄຄຊ
ເລກທີ 0170
ວັນທີ 13 FEB 2017
ໂທລະສັບ 021 217770

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ເລກທີ: 04 /ຫກ
ນະຄອນຫຼວງວຽງຈັນ, ວັນທີ: 09 ກຸມພາ 2017

## ລາຍງານການເຄື່ອນໄຫວປະຈຳອາທິດ ທີ 23-27/01/2017 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ ຂອງທະນາຄານແຫ່ງ ສປປ ລາວ

### I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນໍາພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ການເຄື່ອນໄຫວວຽກງານວິຊາສະເພາະ

#### 1. ສະພາບເສດຖະກິດເງິນຕາສາກົນ

##### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດອ່ອນຄ່າ 0,43% ທຽບເງິນເອີໂຣ ເນື່ອງຈາກນັກລົງທຶນສ່ວນໃຫ່ຍຍັງບໍ່ເຊື່ອໝັ້ນຕໍ່ກັບນະໂຍບາຍຂອງທ່ານ ໂດໂນ ທັມ ປະທານາທິບໍດີສະຫະລັດ ພາຍຫຼັງທີ່ອອກຄຳສັ່ງໃຫ້ມີການສ້າງກຳແພງຂັ້ນຊາຍແດນລະຫວ່າງປະເທດ ສະຫະລັດອາເມລິກາ ແລະ ປະເທດແມັກຊີໂກ. ພ້ອມດຽວກັນນັ້ນ, ຍັງໃຫ້ເພີ່ມກຳລັງປ້ອງກັນຊາຍແດນ ແລະ ອອກມາດຕະການຄວບຄຸມຜູ້ອົບພະຍົບທີ່ເຂົ້າປະເທດສະຫະລັດອາເມລິກາຜິດກົດໝາຍໂດຍບໍ່ອະນຸຍາດໃຫ້ເດີນທາງເຂົ້າປະເທດ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 16-20/01/2017 | ອາທິດນີ້ 23-27/01/2017 | ເປີເຊັນ ແຂງຄ່າ(+) / ອ່ອນຄ່າ(–) |
|---|---|---|---|
| ເອີໂຣ/ໂດລາ | 1,0645 | 1,0691 | -0,43% |
| ໂດລາ/ເຢນ | 115,09 | 114,96 | 0,11% |
| ໂດລາ/ບາດ | 35,400 | 35,270 | 0,37% |
| ໂດລາ/ເປໂຊ | 50,01 | 49,76 | 0,51% |
| ໂດລາ/ຣູເປັຍ | 13.405,00 | 13.357,0 | 0,36% |
| ໂດລາ/ໂດລາສິງກະໂປ | 1,4286 | 1,4265 | 0,15% |
| ໂດລາ/ຢວນ | 6,8783 | 6,8768 | 0,02% |

### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

ລາຄານ້ຳມັນເພີ່ມຂຶ້ນ 3,27% ຈາກ 51,99 ໂດລາ/ບາເຣວ ມາເປັນ 53,69 ໂດລາ/ບາເຣວ ເນື່ອງຈາກຕົວເລກດັດຊະນີດາວໂຈນ ໄດ້ມີການປັບຕົວເພີ່ມຂຶ້ນເປັນ 32,40 ຈຸດ ມາຢູ່ໃນລະດັບ 20.100,90 ຈຸດ ພາຍຫຼັງທີ່ມີການປະກາດຕົວເລກຜົນປະກອບການຂອງບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບຂອງສະຫະລັດ ອອກມາດີ. ສ່ວນລາຄາຄຳຫຼຸດລົງ 1,38% ຈາກ 1.200,73 ໂດລາ/ອອນ ມາເປັນ 1.184,20 ໂດລາ/ອອນ.

## 2. ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,01% ທຽບໃສ່ສະກຸນເງິນໂດລາ ແລະ ອ່ອນຄ່າລົງ 0,35% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າ ເງິນກີບອ່ອນຄ່າລົງ 1,88% ທຽບໃສ່ສະກຸນເງິນໂດລາ ແລະ ອ່ອນຄ່າ 3,44% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 16-20/01/2016 | | | ອາທິດນີ້ 23-27/01/2017 | | | % ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ |
| ອັດຕາທະຄານ[1] | | | | | | | | | | | | |
| ໂດລາ | 8.317,66 | 8.357,98 | 8.333,31 | 8.306,74 | 8.357,95 | 8.334,02 | 0,13% | 0,00% | -0,01% | -1,87% | -1,80% | -1,88% |
| ບາດ | 234,71 | 236,40 | 235,90 | 235,84 | 236,73 | 237,25 | -0,48% | -0,36% | -0,35% | -3,46% | -3,49% | -3,44% |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາປະຈຳອາທິດນີ້ ເພີ່ມຂຶ້ນ 2,73% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 5,99%;
- ປະລິມານເງິນ M2 ເພີ່ມຂຶ້ນ 1,28% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 15,87%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (20-26/01/2017) ເຫັນວ່າ ທທກ ຊື້-ຂາຍໂດລາສຸດທິ 27,10 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 51,59 ລ້ານໂດລາ ແລະ ຂາຍໂດລາໄດ້ 24,49 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 1.143,42 ລ້ານບາດ (ໃນນີ້ ຊື້ບາດໄດ້ 308,63 ລ້ານບາດ ແລະ ຂາຍບາດໄດ້ 1.452,05 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ ເງິນໂດລາຫຼຸດລົງ 49,82% ແຕ່ ເພີ່ມຂຶ້ນ 8,46% ສຳລັບເງິນບາດ.
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍເງິນໂດລາສຸດທິ ຈຳນວນ 5,40 ລ້ານໂດລາ ແລະ ຂາຍເງິນບາດ 149,90 ລ້ານບາດ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ປະລິມານການຊື້-ຂາຍເງິນໂດລາມີຈຳນວນ 2,15 ລ້ານໂດລາສະຫະລັດ ແລະ ເງິນບາດ 2 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ປະລິມານການຊື້-ຂາຍເງິນໂດລາມີຈຳນວນ 0,32 ລ້ານໂດລາສະຫະລັດ.

[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທທກ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ;

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ (ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 13-19/1/2017 | | ອາທິດທີ 20-26/1/2017 | | (%) +ເພີ່ມຂຶ້ນ /-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| **1. ການຊື້ເງິນຕາຕ່າງປະເທດ** | **74,12** | **226,70** | **51,59** | **308,63** | **-30,40%** | **36,14%** |
| - ທ/ຄທຸລະກິດລັດ | 19,40 | 160,77 | 11,37 | 116,03 | -41,39% | -27,83% |
| - ທ/ຄທຸລະກິດອື່ນໆ | 54,72 | 65,93 | 40,22 | 192,60 | -26,50% | 192,13% |
| **2. ການຂາຍເງິນຕາຕ່າງປະເທດ** | **77,50** | **1.396,62** | **24,49** | **1.452,05** | **-68,40%** | **3,97%** |
| - ທ/ຄທຸລະກິດລັດ | 14,33 | 292,83 | 15,53 | 113,02 | 8,37% | -61,40% |
| - ທ/ຄທຸລະກິດອື່ນໆ | 63,17 | 1.103,79 | 8.96 | 1.339,03 | -85,82% | 21,31% |
| **ຊື້-ຂາຍສຸດທິ ທທກ** | **-3,38** | **-1.169,92** | **27,10** | **-1.143,42** | **-901,78%** | **-2,27%** |
| - ຜິດດ່ຽງ ຊື້-ຂາຍ | -4,56% | -516,07% | 52,53% | -370.48% | -1.251,92% | -28,21% |
| - ມູນຄ່າການຊື້-ຂາຍ | **151,62** | **1.623,32** | **76,08** | **1.760,68** | **-49,82%** | **8,46%** |
| **3. ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ** | **-8,22** | **-26,00** | **-5,40** | **-149,90** | | |
| - ທຫລ ຊື້ຈາກ ທທກ | 0,00 | 0,00 | 3,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 8,22 | 26,00 | 8,40 | 149,90 | | |
| **4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ** | **3,11** | **60,63** | **2,15** | **2,00** | | |
| **5. ທຫລ ກັບ ພາກສ່ວນ ອື່ນໆ** | **0,01** | **-0,49** | **0,32** | **0,00** | | |
| -ທຫລ ຊື້ຈາກ ພາກສ່ວນອື່ນໆ | 0,01 | 0,01 | 0,32 | 0,00 | | |
| -ທຫລ ຂາຍໃຫ້ພາກສ່ວນອື່ນໆ | 0,00 | 0,50 | 0,00 | 0,00 | | |

### 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ ໃນເດືອນ 01/2017 ຕົວເລກຄາດຄະເນ 2,84% ເພີ່ມຂຶ້ນ 2,49% ຈາກໃນເດືອນ 12/2016.

### 2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນໍາໃຊ້ເງິນກີບ

ທະນາຄານແຫ່ງ ສປປ ລາວ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນໍາເງິນຕາຕ່າງປະເທດອອກນອກປະເທດ ເພີ່ມຂຶ້ນ 94,3% ທຽບໃສ່ອາທິດຜ່ານມາ ໂດຍມີຈໍານວນ 169,93 ລ້ານໂດລາສະຫະລັດທຽບເທົ່າ.

## 3. ສະພາບການເຄື່ອນໄຫວຊໍາລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊໍາລະສະສາງຂອງ ທຫລ ໃນອາທິດນີ້ ຈໍານວນ [illegible] 89 ສະບັບ ເທົ່າກັບ 11,33% ລວມຈໍານວນເງິນທີ່ໂອນຜ່ານທັງໝົດ 492,03 ຕື້ກີບ ເພີ່ມຂຶ້ນ 181,53 ຕື້ກີບ ເທົ່າກັບ 58,46% ເມື່ອທຽບໃສ່ອາທິດຜ່ານມາ;

ການໂອນເງິນຜ່ານລະບົບຊໍາລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (20-26/01/2017) ມີທັງໝົດ

- ສະກຸນເງິນກີບຈໍານວນ 2.374 ຄັ້ງ ລວມມູນຄ່າໃບໂອນທັງໝົດ 547,63 ຕື້ກີບ ທຽບໃສ່ອາທິດຜ່ານມາເພີ່ມຂຶ້ນ 71,43 ຕື້ກີບ ເທົ່າກັບ 15%,

71,43 ຕື້ກີບ ເທົ່າກັບ 15%,

- ກະຊວງການເງິນ: *ມີການເຄື່ອນໄຫວຈໍານວນ 27 ຄັ້ງ, ມູນຄ່າການໂອນ 242,45 ຕື້ກີບ.*

4. <u>ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ.</u>

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ ປິດຢູ່ທີ່ 1.056,50 ຈຸດ ຫຼຸດລົງ 1,40% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດ ມີປະລິມານຊື້-ຂາຍຮຸ້ນທັງໝົດ 2,76 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 13,83 ລ້ານກີບ ເພີ່ມຂຶ້ນ 4.578,30% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 40,50% ຂອງມູນຄ່າການຊື້-ຂາຍທັງໝົດ.

| ຊື່ | ດັດຊະນີອາທິດທີ 16-20/1/2017 | ດັດຊະນີອາທິດທີ 23-27/1/2017 | (ເພີ່ມຂຶ້ນ+)/(ຫຼຸດລົງ-) | ໝາຍເຫດ |
|---|---|---|---|---|
| ດັດຊະນີຕະຫຼາດຫຼັກຊັບລາວ | 1.071,50 | 1.056,50 | 1,40% | |

<u>ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)</u> (ຫົວໜ່ວຍມູນຄ່າ 1.000 ກີບ)

| | ອາທິດກ່ອນ | | | ອາທິດນີ້ | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| ລາຍຊື່ | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈຳນວນ(ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) |
| ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ | 7.400 | 44.420.000 | 6.003 | 2.400 | 13.000.000 | 5.417 | -67,57 | -70,73 | -586 |
| ບໍລິສັດຜະລິດໄຟຟ້າລາວ ມະຫາຊົນ | 7.000 | 38.080.000 | 5.440 | 2.759.100 | 13.805.995.000 | 5.004 | 39.315,71 | 36.155,24 | -436 |
| ບໍລິສັດລາວເວີນ ມະຫາຊົນ | 12.800 | 73.945.000 | 5.777 | 0 | 0 | 5.800 | -100 | -100 | 23 |
| ບໍລິສັດປີໂຕລ້ຽມເທຣດດິ້ງລາວ ມະຫາຊົນ | 55.700 | 139.250.000 | 2.500 | 4.100 | 10.250.000 | 2.500 | -92,64 | -92,64 | - |
| ບໍລິສັດສຸວັນນີໂຮມເຊັນເຕີ ມະຫາຊົນ | 0 | 0 | 2.800 | 1.500 | 4.250.000 | 2.800 | - | - | - |
| ທັງໝົດ | **82.900** | **295.695.000** | | **2.767.100** | **13.833.495.000** | | 3.237,88 | 4.578,30 | |

3. <u>ວຽກງານອື່ນໆ ທີ່ພົ້ນເດັ່ນ.</u>

- ສຳເລັດການຈັດກອງປະຊຸມ: ❶ ກອງປະຊຸມພົບປະລະຫວ່າງ ທຫລ ແລະ ທ່ານ Antoine CHERY ລັດຖະມົນຕີທີ່ປຶກສາ, ຫົວໜ້າພະແນກເສດຖະກິດ-ການຄ້າຝຣັ່ງ ປະຈຳພາກພື້ນທີ່ປະເທດສິງກະໂປ, ❷ ກອງປະຊຸມປຶກສາຫາລື ລະຫວ່າງ ທຄຕລ ກັບ ກົມກ່ຽວຂ້ອງເພື່ອປຶກສາຫາລື ກ່ຽວກັບການສະເໜີຂໍສິນເຊື່ອຂອງກຸ່ມບໍລິສັດດາວເຮືອງ ເພື່ອເກັບຊື້ກາເຟ, ❸ ກອງປະຊຸມປຶກສາຫາລືກ່ຽວກັບການກະກຽມເຂົ້າຮ່ວມກອງປະຊຸມ ຄັ້ງທີ 39 ປະຈຳປີ 2017 ຂອງຄະນະກຳມະການຮ່ວມມືສອງຝ່າຍລາວ-ຫວຽດນາມ, ແລະ ❹ ກອງປະຊຸມປຶກສາຫາລື ລະຫວ່າງ ທຫລ ແລະ ບໍລິສັດກວດສອບພາຍນອກກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍ ສ່ວຍສາອາກອນ ສະບັບປັບປຸງ.
- ສຳເລັດການເຂົ້າຮ່ວມກອງປະຊຸມ: ❶ ກອງປະຊຸມລັດຖະບານປະຈຳເດືອນ ມັງກອນ 2017, ❷ ກອງປະຊຸມຄະນະເກັບກູ້ໜີ້ສິນ, ❸ ກອງປະຊຸມປຶກສາຫາລື ກ່ຽວກັບວຽກງານການຂໍກູ້ຢືມເງິນຈາກ ທຫລ ເພື່ອນຳໃຊ້ໃນການສ້າງເສັ້ນທາງ 16 B ຢູ່ແຂວງເຊກອງ, ແລະ ❹ ກອງປະຊຸມພົບປະລະຫວ່າງພາກລັດ ແລະ ຜູ້ປະກອບການດ້ານກະສິກຳ

(ແຂວງ ສະຫວັນນະເຂດ); ❺ ກອງປະຊຸມປະກອບຄເຫັນໃສ່ຮ່າງແຜນຍຸດທະສາດ ການຫັນວຽກງານຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເປັນທັນສະໄໝ ທີ່ (ແຂວງວຽງຈັນ).

- ຈັດປາຖະກະຖາເອກະສານທີ່ສຳຄັນຕ່າງໆຂອງຊາດ; ຈັດພິທີມອບໃບຍ້ອງຍໍ ແລະ ຊົມເຊີຍ ປະຈຳປີ 2014-2015; ຈັດພິທີມອບໃບຍ້ອງຍໍພະນັກງານທີ່ໄດ້ປະກອບສ່ວນໃນກອງປະຊຸມຂັ້ນສູງວຽກງານການເງິນ-ທະນາຄານອາຊຽນ;
- ຮັບຕ້ອນການເຂົ້າຢ້ຽມຂໍ່ານັບຄະນະນຳຂອງ ທຫລ ໂດຍ ທ່ານຫົວໜ້າຫ້ອງການ IMF ປະຈາພາກພື້ນອາຊີ-ປາຊີຟິກ ແລະ ທ່ານຜູ້ອຳນວຍການໃຫຍ່ທະນາຄານ ANZ.

## III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ ດັ່ງທີ່ໄດ້ກຳນົດໄວ້ໃນແຜນວຽກປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ສືບຕໍ່ຕິດຕາມຢ່າງເປັນປົກກະຕິໂດຍສະເພາະຕະຫຼາດເປີດ, ອັດຕາດອກເບ້ຍ ແລະ ອັດຕາແລກປ່ຽນລະຫວ່າງທະນາຄານ;
- ສືບຕໍ່ຄົ້ນຄວ້າເນື້ອໃນຂອງຫຼັກການບາເຊວ 2, ວິທີປະຕິບັດ ແລະ ບົດຮຽນຂອງສາກົນ ເພື່ອເປັນແນວທາງໃນການຄົ້ນຄວ້າ ແລະ ຈັດຕັ້ງປະຕິບັດ.
- ສືບຕໍ່ກະກຽມຈັດກອງປະຊຸມສະຫຼຸບວຽກງານໂຄງການປະຈຳປີ 2016 ແລະ ແຜນງານໂຄງການປະຈຳປີ 2017 ວຽກງານໂຄງການການຈຸລະພາກໃນຊົນນະບົດ - ການເຂົ້າເຖິງແຫຼ່ງທຶນຂອງຜູ້ທຸກຍາກ; ກອງປະຊຸມສຳມະນາຮ່ວມລະຫວ່າງ ທຫລ ແລະ IMF ໃຫ້ແກ່ການນຳຂັ້ນສູງຢູ່ ສປປ ລາວ ຄັ້ງວັນທີ 10 ກຸມພາ 2017.
- ເຂົ້າຮ່ວມກອງປະຊຸມຕ່າງໆ: ❶ ກອງປະຊຸມຄະນະປະຈຳພັກ-ຄະນະຜູ້ວ່າການ ປະຈຳເດືອນ ກຸມພາ 2017 ທີ່ (ທຫລ); ❷ ກອງປະຊຸມແລກປ່ຽນບົດຮຽນລະຫວ່າງກົມນະໂຍບາຍເງິນຕາ ກັບ ກົມບໍລິການ ຂອງ (ທຫລ); ❸ ກອງປະຊຸມພົບປະລະຫວ່າງ ກົມຄຸ້ມຄອງທະນາຄານທຸລະກິດ ກັບ ທະນາຄານທຸລະກິດປະຈຳປີ ທີ່ (ໂຮງແຮງລາວພາຊາ); ແລະ ❹ກອງປະຊຸມພົບປະ ລະຫວ່າງ ທະນາຄານ ພັດທະນາລາວ, ທະນາຄານສົ່ງເສີມກະສິກຳ ແລະ ທະນາຄານນະໂຍບາຍ ເພື່ອປຶກສາຫາລືກ່ຽວກັບການຊຸກຍູ້ສິນເຊື່ອກະສິກຳ ຢູ່ແຂວງຄຳມ່ວນ ທີ່ (ທຫລ).
- ກະກຽມຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງ ທ່ານ ເລໂອ ຟາແບັກ, ທູດສະຫະພາບເອີຣົບປະຈຳ ສປປ ລາວ, ຜູ້ບໍລິຫານຂອງບໍລິສັດໄຟຟ້າຫົງສາ ແລະ ແຂກຈາກລັດເຊຍທີ່ (ທຫລ).

ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ

ເພັດສະຖາພອນ ແກ້ວວົງວິຈິດ